# ໜັງສື ຕີໂມເຕ ໒

**ໃຈຄວາມສຳຄັນ** ເປັນແບບຢ່າງທີ່ດີດ້ວຍອົງພຣະຄຣິດ

**ຈຳນວນບົດ:** ໔ ບົດ

**ວ່າດ້ວຍເວລາທີ່ຂຽນ:**

ຈົດໝາຍສະບັບນີ້ ທ່ານໂປໂລໄດ້ຂຽນຕອນຢູ່ໃນຄຸກທີ່ກຸງໂຣມ ຄືເມື່ອເພິ່ນຖືກຂັງໃນຄັ້ງທີສອງເມື່ອປີ ຄ.ສ. ໖໗ ທ່ານໂປໂລຖືກຄຸກໃນຄັ້ງນີ້ ກໍດ້ວຍວ່າ ເວລານັ້ນໄດ້ມີການຂົ່ມເຫັງພວກຄຣິສຕຽນຢ່າງໜັກ ເພາະກະສັດເນໂຣຜູ້ເປັນກະສັດທີ່ຊົ່ວຮ້າຍ ໄດ້ທຳການເຜົາກຸງໂຣມຈົນໝົດສິ້ນ ເພື່ອຈະສ້າງຂຶ້ນໃໝ່ໃຫ້ງາມກວ່າເກົ່າ ແຕ່ເພື່ອເວັ້ນຈາກຄວາມຕິຕຽນນິນທາແລະຄວາມຍຸ້ງຍາກຂອງຕົນ ກະສັດເນໂຣຈຶ່ງເອົາເລື່ອງນີ້ໄປປ້າຍໃສ່ພວກຄຣິສຕຽນ ວ່າຄົນພວກນີ້ເປັນຜູ້ເຜົາກຸງໂຣມ ສະນັ້ນຈຶ່ງມີການຂົ່ມເຫັງແລະກົດຂີ່ພວກທີ່ເຊື່ອຢ່າງໜັກ ຈົນພວກເຂົາໄດ້ຈັບທ່ານໂປໂລໄປຂັງຄຸກໄວ້ ເພາະວ່າເພິ່ນເປັນອາຈານຂອງພວກຄຣິສຕຽນ.

ດັ່ງນັ້ນ ໃນໜັງສືນີ້ທ່ານໂປໂລຈຶ່ງຂຽນວ່າ "ຂ້າພຣະເຈົ້າຜູ້ເປັນນັກໂທດເພາະເຫັນແກ່ພຣະອົງ (໑:໘,໑໖) ຖືກລ່າມໂສ້ໄວ້ເໝືອນເປັນຜູ້ຮ້າຍ (໒:໙) ເວລາທີ່ຂ້າພຣະເຈົ້າຈະຕາຍນັ້ນກໍໃກ້ເຂົ້າມາແລ້ວ (໔:໖) ຄົນທັງຫລາຍໄດ້ປິ່ນໜ້າໜີຈາກຂ້າພຣະເຈົ້າແລ້ວ ບົດ ໑:໑໕

## ວ່າດ້ວຍຄວາມມຸ່ງໝາຍ

໑. ທ່ານໂປໂລຮູ້ດີວ່າ ທ່ານຕີໂມເຕເປັນຄົນໃຈອ່ອນ ບໍ່ກ້າຫານປານໃດ ສະນັ້ນ ຈຶ່ງຂຽນໄປ ເລົ້າໂລມ ແລະ ຕັກເຕືອນ ບໍ່ໃຫ້ຍ້ານກົວ (໑:໖–໘) ແລະດ້ວຍວ່າ ໃນຄາວນັ້ນມີການອັນຕະລາຍຫລາຍ ສຳລັບຄົນຄຣິສຕຽນ ທ່ານໂປໂລຈຶ່ງຂຽນໄປຕັກເຕືອນໃຫ້ຢູ່ໃນຄວາມສັດຊື່ແລະໃຫ້ມີໃຈພ້ອມທີ່ຈະເສັຍສະລະໄດ້ (໒:໑; ໓:໑໒ ໔:໑–໒)

໒. ທ່ານໂປໂລຕ້ອງການຢາກບອກວ່າ ໃນວັນສຸດທ້າຍຈະມີຄວາມຍາກ ແລະຄວາມຊົ່ວຫລາຍຢ່າງເກີດຂຶ້ນ ໓:໑–໙

໓. ກ່ອນຈະສິ້ນຊີວິດນັ້ນ ເພິ່ນຢາກເຫັນທ່ານຕີໂມເຕເສັຍກ່ອນ ສະນັ້ນ ຈຶ່ງຂຽນໄປເຊີນໃຫ້ເພິ່ນມາຫາ ໔:໙–໑໓,໒໑

## ວ່າດ້ວຍເນື້ອຄວາມ:

ໜັງສືຕີໂມເຕທີສອງນີ້ເປັນໜັງສືສະບັບທີ ໑໓ ແລະເປັນສະບັບສຸດທ້າຍຂອງທ່ານໂປໂລ ໃນໜັງສືສະບັບນີ້ເພິ່ນໄດ້ສະແດງຄວາມຄິດຄວາມເຫັນ ແລະຄວາມປາຖນາຂອງຂ້າໃຊ້ແຫ່ງພຣະເຈົ້າ ເຖິງແມ່ນເພິ່ນເອງຮູ້ຢູ່ວ່າ ໃກ້ຈະຖືກຂ້າຕາຍແລ້ວ ແຕ່ກໍບໍ່ມີຄວາມຢ້ານ ແລະບໍ່ຄິດເຖິງຕົນເອງເລີຍ ມີແຕ່ຄິດເຖິງແຕ່ຄຣິສຕະຈັກແລະທ່ານຕີໂມເຕ ຜູ້ເປັນລູກທີ່ຮັກໃນຄວາມເຊື່ອເທົ່ານັ້ນ ຄວາມນຶກຄິດຂອງເພິ່ນໄດ້ມີດັ່ງນີ້.

ກ. ເມື່ອຄິດເຖິງອະດີດ ເພິ່ນກໍມີຄວາມສຸກໃຈເພາະບໍ່ມີຄວາມເສັຍດາຍ ແລະບໍ່ມີສິ່ງໃຫ້ຄົນຄຣິສຕຽນໄດ້ ຕິກິຈການທີ່ພຣະເຈົ້າຊົງມອບໃຫ້

ເພິ່ນທຳ ເພິ່ນກໍທຳສຳເຣັດແລ້ວ ບົດ ໑:໑໓; ໓:໑໐–໑໑; ໔:໗

ຂ. ເມື່ອຄິດເຖິງປັຈຸບັນ ເພິ່ນກໍບໍ່ຢ້ານ ເຖິງແມ່ນຮູ້ວ່າເຂົາຈະຂ້າຖິ້ມ ເພິ່ນກໍບໍ່ອຸກແລະບໍ່ເສັຍໃຈເລີຍ (໔:໖) ມີແຕ່ຄິດວ່າຈະເປັນພະຍານຝ່າຍພຣະເຢຊູໄປຈົນເຖິງທີ່ສຸດ ບົດ ໔:໑–໘

ຄ. ເມື່ອຄິດເຖິງອານາຄົດ ກໍໝັ້ນໃຈວ່າ ຈະໄດ້ຮັບບຳເໜັດຣາງວັນ (໔:໘) ໃນໜັງສືນີ້ທ່ານໂປໂລໄດ້ບອກວ່າ ໃນການເປັນພະຍານຂອງເພິ່ນນັ້ນ ໄດ້ມີຄວາມຍາກລຳບາກທີ່ສຸດ ແລະໄດ້ຖືກຂົ່ມເຫັງຢ່າງໜັກ ແຕ່ພຣະເຈົ້າກໍຊົງໂຜດໃຫ້ພົ້ນແລະໃຫ້ມີໄຊຊນະໄດ້ ບົດ ໔:໑໑

## ວ່າດ້ວຍຜູ້ປ່າວປະກາດ

໑. ຄຳເອີ້ນຂອງຜູ້ປ່າວປະກາດ ບົດ ໑:໑,໖
໒. ຄວາມທຸກລຳບາກຂອງຜູ້ປ່າວປະກາດ ບົດ ໒:໑-໑໓
໓. ພວກທີ່ຂັດຂວາງຜູ້ປ່າວປະກາດ ບົດ ໓:໑–໑໓
໔. ພື້ນຖານຂອງຜູ້ປ່າວປະກາດ ບົດ ໓:໑໔–໑໗
໕. ບຳເໜັດຣາງວັນຂອງຜູ້ປ່າວປະກາດ ບົດ ໔:໖–໑໘

## ວ່າດ້ວຍຊື່ແລະຄວາມໝາຍຂອງລູກພຣະເຈົ້າ

໑. ລູກຂອງເຮົາ ໒:໑ ໝາຍເຖິງການເກີດໃໝ່
໒. ທະຫານ ໒:໓ ໝາຍເຖິງຄວາມຍາກລຳບາກ
໓. ນັກແຂ່ງຂັນ ໒:໕ ໝາຍເຖິງການເຝິກຫັດຈິດວິນຍານ

໔. ຄົນໄຖນາ ໒:໖ ໝາຍເຖິງການບົວຣະບັດດ້ວຍ
ຄວາມພຽນ

໕. ຄົນງານ ໒:໑໕ ໝາຍເຖິງຄວາມຈຳນານ

໖. ເຄື່ອງໃຊ້ (ພາຊນະ) ໒:໒໑ ໝາຍເຖິງຜົລປະໂຍດ

໗. ຄົນຮັບໃຊ້ ໒:໒໔ ໝາຍເຖິງຄວາມສັດຊື່

ການແບ່ງເປັນພາກ:

ພາກທີ ໑ ວ່າດ້ວຍຄວາມຕ້ອງການຂອງຜູ້ບົວຣະບັດ
ບົດ ໑–໒

໑. ໃຫ້ມີໃຈຮ້ອນລົນ ບົດ ໑:໖–໗

໒. ໃຫ້ມີກຳລັງໃຈ ບົດ ໑:໘–໑໒

໓. ໃຫ້ຕັ້ງໝັ້ນຄົງຢູ່ ບົດ ໑:໑໓–໑໘

໔. ໜ້າທີ່ຂອງຜູ້ບົວຣະບັດ ບົດ ໒:໑–໗

໕. ຫລັກຄວາມຈິງ ບົດ ໒:໘–໑໔

໖. ເຣື່ອງທີ່ກ່ຽວກັບຄຣິສຕະຈັກ ບົດ ໒:໑໕–໒໖

ພາກທີ ໒ ວ່າດ້ວຍຄວາມຍາກທີ່ຈະເກີດຂຶ້ນເມື່ອຄາວ
ສຸດທ້າຍ ບົດ ໓–໔

໑. ຈະມີຄວາມຊົ່ວຕ່າງໆ ເກີດຂຶ້ນ ບົດ ໓:໑–໙

໒. ໃຫ້ມີກຳລັງໃຈຕໍ່ສູ້ ບົດ ໓:໑໐–໑໗

໓. ໃຫ້ປ່າວປະກາດ ບົດ ໔:໑–໒

໔. ສາເຫດທີ່ຕ້ອງປ່າວປະກາດ ບົດ ໔:໓–໘

໕. ຄຳຮ້ອງຂໍແລະຄຳສຸດທ້າຍ ບົດ ໔:໙–໒໒